# ການເຂົ້າລະຫັດແມ່ນຫຍັງ?

### ແລະ ຜູ້ລະເມີດທາງເພດເດັກໄດ້ນຳໃຊ້ການເຂົ້າລະຫັດແນວໃດ

## ການເຂົ້າລະຫັດນຳໃຊ້ແນວໃດ?

ການເຂົ້າລະຫັດແມ່ນວິທີການປົກປິດ ຫຼື ເຊື່ອງຊ້ອນຂໍ້ຄວາມ ໂດຍນຳໃຊ້ຊຸດໂປຣແກຣມຄອມພິວເຕີທີ່ມີຫຼາຍຂັ້ນຕອນ [:ໂປຣແກຣມເຂົ້າລະຫັດ] ເພື່ອປ້ອງກັນໃນກໍລະນີທີ່ຂໍ້ຄວາມດັ່ງກ່າວຫາກ "ຕົກໃນມືຄົນບໍ່ດີ" ທີ່ເຫັນ ຫຼື ອ່ານຂໍ້ຄວາມດັ່ງກ່າວຈະບໍ່ສາມາດເຂົ້າໃຈວ່າຂໍ້ຄວາມດັ່ງກ່າວແມ່ນເວົ້າກ່ຽວກັບຫຍັງ. ຕົວຢ່າງ ໂປຣແກຣມດັ່ງກ່າວປ່ຽນຂໍ້ຄວາມ "ຂ້ອຍຈະພົບເຈົ້າໃນວັນຈັນ" ເປັນຂໍ້ຄວາມທີ່ເຂົ້າລະຫັດ “p98hUls#yeb!”




ຂໍ້ຄວາມທີ່ບໍ່ສາມາດເຂົ້າໃຈໄດ້ດັ່ງກ່າວ- ເຊິ່ງເປັນຂໍ້ຄວາມທີ່ໃສ່ລະຫັດ- ຈະຖືກສົ່ງຜ່ານທາງອິນເຕີເນັດໄປຫາຜູ້ຮັບ. ບຸກຄົນທີ່ໄດ້ຮັບຂໍ້ຄວາມດັ່ງກ່າວຕ້ອງມີ ‘ກຸນແຈຖອດລະຫັດ’ ທີ່ຄົນອື່ນບໍ່ຮູ້ຈັກ ແລະ ຜູ້ສົ່ງໄດ້ສະໜອງກຸນແຈດັ່ງກ່າວໃຫ້ຜູ້ຮັບເພື່ອຖອດລະຫັດ ຫຼື ກູ້ຂໍ້ຄວາມຕົ້ນສະບັບກັບຄືນມາ. ເຊິ່ງຂະບວນການດັ່ງກ່າວເອີ້ນວ່າຂະບວນການຖອດລະຫັດ. ຖ້າບໍ່ມີກຸນແຈດັ່ງກ່າວ ຈະບໍ່ສາມາດອ່ານຂໍ້ຄວາມ ຫຼື ເບິ່ງຮູບພາບທີ່ສົ່ງມານັ້ນໄດ້.

### ການນຳໃຊ້ການເຂົ້າລະຫັດແມ່ນເພື່ອຄວາມປອດໄພ:

ຂໍ້ມູນ (ເປັນຕົ້ນແມ່ນແຟມຂໍ້ມູນ, ຮູບພາບ, ຄອມພິວເຕີ), ທຸລະກຳທາງອິນເຕີເນັດ (ເປັນຕົ້ນແມ່ນການທະນາຄານ), ລະຫັດຜ່ານ, ເຄືອຂ່າຍ ແລະ ອີເມວ

ຂະບວນການເຂົ້າລະຫັດ/ຖອດລະຫັດແມ່ນມີດັ່ງຕໍ່ໄປນີ້*:




* ໝາຍເຫດ: ນີ້ແມ່ນພຽງຕົວຢ່າງໜຶ່ງເທົ່ານັ້ນ ແລະຍັງມີຫຼາຍວິທີການໃນການເຂົ້າລະຫັດ ແລະ ຖອດລະຫັດຂໍ້ມູນ

## ຜູ້ລະເມີດທາງເພດເດັກເປັນຜູ້ນຳໃຊ້ການເຂົ້າລະຫັດດັ່ງກ່າວ

ຜູ້ລະເມີດທາງເພດເດັກຈະຕິດຕໍ່ສື່ສານຫາກັນເອງທາງອິນເຕີເນັດ ໂດຍຈະນຳໃຊ້ເຄື່ອງມືຫຼາຍຮູບແບບໃນການປົກປິດຕົວຕົນ ແລະ ການກະທຳຂອງພວກເຂົາຈາກເຈົ້າໜ້າທີ່.

ຕົວຢ່າງ: ຜູ້ລະເມີດຈະເຂົ້າລະຫັດສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ເພື່ອທີ່ບຸກຄົນ ຫຼື ອົງການຈັດຕັ້ງອື່ນບໍ່ສາມາດເຂົ້າໃຈໄດ້ເມື່ອໄດ້ຮັບສິ່ງດັ່ງກ່າວ ຫຼື ພວກເຂົາອາດຈະເຂົ້າລະຫັດຄອມພິວເຕີ ຫຼື ໜ່ວຍຄວາມຈຳເພື່ອສະກັດກັ້ນເຈົ້າໜ້າທີ່ບໍ່ໃຫ້ສາມາດເຂົ້າເຖິງ ຫຼື ພົບເຫັນຫຼັກຖານໃນໄລຍະການເຂົ້າກວດຄົ້ນບ້ານເຮືອນ.

ນອກຈາກນັ້ນ, ການເຂົ້າລະຫັດຍັງເຮັດໃຫ້ຜູ້ລະເມີດສາມາດລະບຸຕົວຕົນຂອງບຸກຄົນທີ່ພວກເຂົາຕິດຕໍ່ສື່ສານນຳທາງອິນເຕີເນັດໄດ້.

ເຊິ່ງໂປຣແກຣມເຂົ້າລະຫັດບາງອັນທີ່ບໍ່ເຂັ້ມແຂງຈະຖືກທຳລາຍໂດຍຄອມພິວເຕີທີ່ມີລະບົບເຂັ້ມແຂງ, ແຕ່ວ່າໃນທາງປະຕິບັດ ໂດຍທົ່ວໄປແລ້ວບັນດາໂປຣແກຣມເຂົ້າລະຫັດທີ່ເຂັ້ມແຂງທີ່ສາມາດຫາໄດ້ທົ່ວໄປ ຈະບໍ່ສາມາດເປີດໄດ້ໂດຍທີ່ບໍ່ມີກຸນແຈຖອດລະຫັດ.

ເຊິ່ງການເຂົ້າລະຫັດພາໃຫ້ເກີດມີຄວາມຊັບຊ້ອນເພີ່ມເຕີມໃນຂະບວນການສືບສວນສອບສວນຂອງໜ່ວຍງານບັງຄັບໃຊ້ກົດໝາຍ.

ເອກະສານຂໍ້ມູນຕົວຈິງສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ. ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ